# ໜັງສືຣະບຽບການພວກເລວີ (ໜັງສືເລວີ)

ໃຈຄວາມສຳຄັນ: ການຕັ້ງຢູ່ໃນຄວາມບໍຣິສຸດ

ຂໍ້ຄວາມສຳຄັນ: ບົດ ໑໗:໑໑

ຈຳນວນບົດ: ໒໗ ບົດ

ຜູ້ຂຽນ: ທ່ານ ໂມເຊ

## ໑. ຄຳນຳ:

ໜັງສືເຫລັ້ມນີ້ບໍ່ແມ່ນເຣື່ອງພົງສາວະດານ ແຕ່ເປັນເຣື່ອງທີ່ອອກຈາກພຣະໂອດຂອງພຣະເຈົ້າແລະເປັນເຣື່ອງທີ່ກ່ຽວກັບຣະບຽບທັມ ຊຶ່ງນຳພວກປະໂລຫິດໃຫ້ປະພຶດຕາມພຣະບັນຍັດ ຂອງພຣະເຈົ້າດັ່ງຄຳວ່າ "ພຣະເຢໂຮວາຊົງກ່າວຕໍ່ທ່ານໂມເຊ" ໄດ້ມີຢູ່ໃນໜັງສືນີ້ເຖິງ ໕໖ ເທື່ອ

## ໒. ວ່າດ້ວຍເນື້ອຄວາມ:

ພຣະທັມຄັມພີແມ່ນໜັງສືທີ່ເອົາເຖິງແຜນການຂອງພຣະເຈົ້າທີ່ມີຕໍ່ມະນຸດ ຄືວ່າໃນໜັງສືຕົ້ນເດີມພຣະເຈົ້າຊົງຂັດເລືອກເອົາຄົນພວກນຶ່ງໄວ້. ໃນໜັງສືອົພຍົກພຣະເຈົ້າຊົງໂຜດຊ່ອຍພວກນັ້ນ ໃຫ້ພົ້ນຈາກ ຄວາມ ເປັນທາດ ແລະໃນໜັງສືເລວີພຣະເຈົ້າຊົງຈັດສັນພວກນັ້ນໃຫ້ຕັ້ງຢູ່ໃນຄວາມບໍຣິສຸດຂໍ້ຄວາມສຳຄັນທີ່ມີຢູ່ໃນໜັງສືນີ້ຄື: "ຈົ່ງບໍຣິສຸດເພາະຝ່າຍເຮົາພຣະເຢໂຮວາກໍບໍຣິສຸດ" (ບົດ ໑໙:໒)

໓. ເຄື່ອງບູຊາຕ່າງໆ:

໑. ການເຜົາສັດບູຊາ ໃນບົດ ໑ ໝາຍເຖິງຄວາມສຳເຣັດຂອງພຣະເຢຊູທີ່ຊົງມອບຕົນແກ່ພຣະເຈົ້າ.

໒. ຖວາຍເຂົ້າໜົມບູຊາ ໝາຍເຖິງກິຈການອັນດີທີ່ສຸດຂອງບຸດມະນຸດ ຜູ້ຊົງເປັນເຂົ້າຈີ່ແຫ່ງຊີວິດ (ບົດທີ ໒)

໓. ເຄື່ອງບູຊາໂມທະນາພຣະຄຸນ ໝາຍເຖິງຄວາມຍິນດີແລະຄວາມສຸກສຳຣານ ທີ່ມີຢູ່ດ້ວຍກັນກັບພຣະເຢຊູ (ບົດທີ ໓)

໔. ເຄື່ອງບູຊາໄຖ່ໂທດ ໝາຍເຖິງພຣະເຢຊູຜູ່ບໍ່ມີບາບ ແຕ່ຊົງຮັບເອົາບາບຂອງພວກເຮົາ (ບົດ ໔, ໂຣມ ໘:໓; ໒ ໂກລິນໂທ ໕:໒໑)

໕. ເຄື່ອງບູຊາບົກຄວາມຜິດ: ໝາຍເຖິງພຣະເຢຊູຜູ້ໃຫ້ອະໄພຄວາມຜິດແຕ່ຮັບໃຊ້ບາບຂອງພວກເຮົາ (ບົດທີ ໕:໑໔–໒໖)

໔. ເທສະການທັງ ໗ ຄື:

໑. ເທສະການແຫ່ງປັສຄາ ເພື່ອລະນຶກວັນທີ່ພົ້ນຈາກເມືອງເອຢິບ (ບົດ ໒໓:໔–໕) ແລະໝາຍເຖິງການໄຖ່ໂທດ (໑ ໂກລິນໂທ ໕:໗)

໒. ເຂົ້າຈີ່ບໍ່ມີເຊື້ອ ໝາຍເຖິງການເປັນຜູ້ບໍຣິສຸດ (ບົດທີ ໒໓:໖-໘)

໓. ເຂົ້າເດີນ ໝາຍເຖິງການຄືນມາຈາກຕາຍ (ບົດທີ ໒໓:໑໐-໑໔ ໂຢຮັນ ໑໒:໒໔ ໑ ໂກລິນໂທ໑໕:໒໐-໒໓)

໔. ວັນເພນເຕກອດ ໝາຍເຖິງການກ່ຽວເຂົ້າ (໒໓:໑໕ ໒໒; ກິຈການ ໒)

໕. ເປົ່າແກ ໝາຍເຖິງການທຳນວາຍເຖິງການສເດັດມາຂອງພຣະເຢຊູ (໒໓:໒໓-໒໕) ໑ ເທຊະໂລນິກ ໔:໑໖

໖. ການໄຖ່ໂທດ ໝາຍເຖິງການເປັນໄມຕຣີກັນກັບພຣະເຈົ້າ (໒໓:໒໖-໓໒)

໗. ເທສການແຫ່ທີ່ຢູ່ອາໄສ ເພື່ອໃຫ້ພວກອິສຣາເອັນລະນຶກເຖິງວັນທີ່ທ່ອງທ່ຽວໄປມາໃນປ່າ (ບົດ ໒໓:໓໓-໓໖)

## ໕. ຂໍ້ປຽບທຽບ

໑. ນ້ຳມັນ: ປຽບ ເຖິງ ພຣະວິນຍານບໍຣິສຸດ

໒. ກຳບານ: ປຽບເຖິງ ການອ້ອນວອນ ການຂາບໄຫວ້

໓. ເຊື້ອ ປຽບເຖິງ ການມ່ວນຊື່ນທາງຝ່າຍເນື້ອໜັງແລະຄວາມເປັນໄປຂອງຊາວໂລກ

໔. ຂີ້ທູດ ປຽບ ເຖິງ ບາບ

ໃນໜັງສືເຮັບເຣີຕັ້ງແຕ່ບົດ ໙-໑໐ ມີຄວາມອະທິບາຍເຖິງເຣື່ອງບູຊາທີ່ປຽບທຽບກັບການຖວາຍບູຊາຂອງພຣະເຢຊູ

## ຂ. ບົດສໍາຄັນ

ບົດທີ ໑໐ ວ່າດ້ວຍລູກຊາຍຂອງທ່ານອາໂຣນ ໒ ຄົນຖືກປະ–ຫານຊີວິດ

„ ໑໖ ວ່າດ້ວຍການ ຖວາຍບູຊາເພື່ອໄຖ່ໂທດ ຊຶ່ງໄດ້ກະທໍາກັນປີລະເທື່ອ ຄືເມື່ອເຖິງວັນນັ້ນຜູ້ເປັນປະໂລຫິດຈະເຂົ້າໄປໃນບ່ອນບໍລິສຸດ ໂດຍຖືໂລຫິດທີ່ຈະໄຖ່ໂທດເອົາໄປພ້ອມນີ້ ໝາຍເຖິງພຣະເຢຊູຜູ້ສເດັດຂຶ້ນໄປຫາພຣະເຈົ້າດ້ວຍໂລຫິດຂອງພຣະອົງ (ເຮັບເຣີ ໙:໑໒,໒໔)

## ຄ. ພາບແບ່ງເປັນພາກ

ໜັງສືເຫລັ້ມນີ້ ແບ່ງເປັນ ສອງພາກຕາມ ຄວາມ ສໍາຄັນທີ່ໄດ້ ເຫັນແລ້ວນັ້ນຄື: ພາກທີ ໑. ມີທາງເຂົ້າໄປຫາພຣະເຈົ້າດ້ວຍການຖວາຍບູຊາ ບົດ ໑-໑໐

| | |
|---|---|
| ກ. ລະບຽບຂອງການຖວາຍບູຊາ | ບົດ ໑–໗ |
| ຂ. ລະບຽບຂອງພວກປະໂລຫິດ | ບົດ ໘–໑໐ |
| ພາກທີ ໒. ການປະພຶດຕາມຢ່າງ ພຣະເຈົ້າຄືຕັ້ງຢູ່ໃນຄວາມບໍລິສຸດ | ບົດ ໑໑–໒໗ |
| ກ. ລະບຽບໃນການຮັກສາຄວາມສະອາດ | ບົດ ໑໑–໑໖ |
| ຂ. ລະບຽບໃນການຮັກສາຄວາມບໍລິສຸດ | ບົດ ໑໗–໒໗ |